LAOS Financial Support for Civil Servants.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກກະລາດ ປະຊາທິປະໄຕ ເອກກະພາບ ວັດທະນາຖາວອນ

ກະຊວງການເງິນ

ເລກທີ 1405 /ກງ

ກະຊວງສຶກສາທິການ
ເລກທີ 4026
ວັນທີ 21/9/2000

## ແຈ້ງການແນະນຳ

## ກ່ຽວກັບການເພີ່ມເງິນອຸດໜູນຄ່າຄອງຊີບແລະອຸດໜູນຕ່າງໆ ໃຫ້ພະນັກງານແລະລັດຖະກອນຂອງລັດ.

------------------------

ເຖິງ : ບັນດາທ່ານລັດຖະມົນຕີ,ປະທານຄະນະກຳມະການທຽບເທົ່າ,ເຈົ້າແຂວງ,ເຈົ້າຄອງກຳແພງນະຄອນ ແລະ ຫົວໜ້າເຂດພິເສດ.

ເລື່ອງ : ການເພີ່ມເງິນອຸດໜູນຄ່າຄອງຊີບ ແລະ ອຸດໜູນຕ່າງໆ ສົກງົບປະມານປີ 2000-2001.

- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ,ສະບັບເລກທີ05/ສພຊ,ລົງວັນທີ18/07/94.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ..........,ລົງວັນທີ...........ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2.000-2.001

ເພື່ອຜັນຂະຫຍາຍແລະຈັດຕັ້ງປະຕິບັດ ນະໂຍບາຍຕໍ່ພະນັກງານລັດຖະກອນຂອງພັກ ແລະ ລັດຖະບານ,ເວົ້າສະເພາະການເພີ່ມເງິນອຸດໜູນຄ່າຄອງຊີບ ແລະ ອຸດໜູນຕ່າງໆ ໃນສົກປີງົບປະມານ 2000-2001 ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີນັ້ນ:

### ລັດຖະມົນຕີ ກະຊວງການເງິນ ແນະນຳ

1 . ການເພີ່ມເງິນອຸດໜູນຄ່າຄອງຊີບ ແລະ ເງິນອຸດໜູນຕ່າງໆຕື່ມ ໃນຄັ້ງນີ້ ແມ່ນໃຫ້ເລີ່ມປະຕິບັດເປັນເອກກະພາບ ໃນຂອບເຂດທົ່ວປະເທດ ໂດຍເລີ່ມແຕ່ ສົກປີງົບປະມານ 2000 - 2001,ຊຶ່ງເປົ້າໝາຍດັ່ງນີ້:

- ພະນັກງານລັດຖະກອນ,ທະຫານ,ຕຳຫລວດ,ພະນັກງານບຳນານ ແລະ ພະນັກງານເສັຍອົງຄະ ເພີ່ມຕື່ມຜູ້ລະ 30.000 ກີບ/ຄົນ/ເດືອນ ( ສາມສິບພັນກີບ ).
- ລູກພະນັກງານ, ເມັຍພະນັກງານ ທີ່ໄດ້ຮັບນະໂຍບາຍອຸດໜູນຕາມນະໂຍບາຍຂອງລັດ ອຸດໜູນເພີ່ມຕື່ມຜູ້ລະ 10.000 ກີບ/ຄົນ/ເດືອນ ( ສິບພັນກີບ ).
- ນັກຮຽນຜູ້ທີ່ໄດ້ຮັບເງິນອຸດໜູນເບັ້ຍລ້ຽງໄດ້ດັ່ງນີ້:

[redacted]

+ ນັກຮຽນເດັກກຳພ້າ ຈາກ 42.500 ກີບ/ຄົນ/ເດືອນ ມາເປັນ 90.000 ກີບ.

+ ນັກຮຽນຊົນເຜົ່າ ຈາກ 45.000 ກີບ/ຄົນ/ເດືອນ ມາເປັນ 90.000 ກີບ.

+ ອຸດໜູນຄູພະສົງ ຈາກ 20.000 ກີບ/ຄົນ/ເດືອນ ມາເປັນ 30.000 ກີບ/ຄົນ/ເດືອນ.

+ ອຸດໜູນນັກຮຽນຕ່າງປະເທດ ຈາກ 250.000 ກີບ/ຄົນ/ເດືອນ ມາເປັນ 560.000 ກີບ/ຄົນ/ເດືອນ.

- ນາຍບ້ານ,ຮອງນາຍບ້ານ,ເລຂາໜ່ວຍພັກຮາກຖານ ອຸດໜູນເພີ່ມຕື່ມຜູ້ລະ 10.000 ກີບ/ຄົນ/ເດືອນ.

[redacted]

- ນັກໂທດພາຍໃນ ແລະ ນັກໂທດຕ່າງປະເທດ ອຸດໜູນອັດຕາກິນ ເພີ່ມຕື່ມຜູ້ລະ 10.000 ກີບ/ຄົນ/ເດືອນ. ບັນດາເປົ້າໝາຍອື່ນທີ່ບໍ່ນອນໃນແຈ້ງການສະບັບນີ້ ໃຫ້ປະຕິບັດຕາມເກົ່າ.

2 . ໃນການຈັດຕັ້ງປະຕິບັດການເພີ້ມເງິນອຸດໜູນ ຄ່າຄອງຊີບ ແລະ ອຸດໜູນຕ່າງໆສົກປີ 2000-2001 ນີ້, ສະເໜີ ໃຫ້ແຕ່ລະ ກົມກອງ,ກະຊວງ,ຂະແໜງການ ແລະ ທ້ອງຖິ່ນ ດຳເນີນການກວດກາ ຈຳນວນພົນ ທີ່ມີໜ້າຕົວຈິງ ຂອງວັນທີ30/9/2000 ເປັນຫລັກໃນການຄິດໄລ່, ສ່ວນການເພີ້ມຈຳນວນພົນໃນສົກງົບປະມານປີ 2000-2001 ແມ່ນໃຫ້ພາກສ່ວນກ່ຽວຂ້ອງເອົາບັນຊີຈຳນວນພົນທີ່ສະເໜີໃໝ່ໄປຂໍອະນຸມັດຕົກລົງຈາກຄະນະຈັດຕັ້ງສູນກາງພັກແລະລັດຖະບານຕາມລຳດັບ.

3. ບັນດາກະຊວງ,ອົງການທຽບເທົ່າຢູ່ອ້ອມຂ້າງສູນກາງ,ບັນດາພະແນກການ ຢູ່ອ້ອມຂ້າງແຂວງ ມີໜ້າທີ່ສັງລວມບັນຊີການເພີ່ມເງິນອຸດໜູນໃນຄັ້ງນີ້ ແລ້ວສົ່ງໃຫ້ກະຊວງການເງິນ ກວດຜ່ານແລະອະນຸມັດ.ສຳລັບຢູ່ທ້ອງຖິ່ນແມ່ນໃຫ້ ພະແນກການເງິນປະຈຳແຂວງ,ກຳແພງນະຄອນ,ແລະ ເຂດພິເສດ ຮັບຜິດຊອບກວດຜ່ານອະນຸມັດ ການເບີກຈ່າຍຕາມລະບຽບຫລັກການ.

4. ການເພີ່ມເງິນ ອຸດໜູນຄ່າຄອງຊີບ ແລະ ອຸດໜູນຕ່າງໆ ແມ່ນໃຫ້ເລີ້ມຈັດຕັ້ງປະຕິບັດນັບ ແຕ່ວັນທີ 1/10/2000 ເປັນຕົ້ນໄປ.

ດັ່ງນັ້ນ,ຈຶ່ງຂໍແຈ້ງການມາເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ຖືກຕ້ອງ.

ສຳເນົາຖືກຕ້ອງຕາມສະບັບເດີມ :

ຂາອອກເລກທີ 1394 /ຫກ.2000

ວຽງຈັນ, ວັນທີ 22 ກັນຍາ(9) 2000

ຫົວໜ້າຫ້ອງການກະຊວງສຶກສາທິການ.

ບຸນທະວີ ອິນທິລາດ

ວຽງຈັນ,ວັນທີ 20 SEP 2000

ຮອງນາຍົກລັດຖະມົນຕີ,

ລັດຖະມົນຕີ ວ່າການກະຊວງການເງິນ